# ບົດທີ 13

# ພະເຈົ້າຊົງບັນດົນໃຈຜູ້ທີ່ຂຽນພະຄຳພີ

## ພາກຕົ້ນ: ຄວາມເປັນອັນໜຶ່ງອັນດຽວກັນ



**1** ໃນບົດຮຽນກ່ອນນັ້ນ ເຮົາໄດ້ຮຽນເລື່ອງການທົດລອງຂອງພະເຢຊູໃນສະພາບເປັນມະນຸດ ພະເຢຊູເຄີຍໃຊ້ອັນໃດແດ່ ເປັນເຄື່ອງອາວຸດຕໍ່ສູ້ກັບມານ? ____________________________
ແລະ ____________________________________________________________________

**2** ຖືກຕ້ອງແລ້ວ! ທຸກໆ ຄັ້ງທີ່ພະອົງຕໍ່ສູ້ມານ ພະອົງຊົງໃຊ້ແຕ່ເຄື່ອງອາວຸດເຫຼົ່ານັ້ນ ພວກຄຣິສຕຽນເຮົາໃນຍຸກນີ້ມີເຄື່ອງ ອາວຸດເຊັ່ນດຽວກັນຄື: ພະວິນຍານຂອງພະເຈົ້າ ແລະພະທຳຂອງພະເຈົ້າ. ທຸກເທື່ອທີ່ພະເຢຊູຊົງກ່າວວ່າ: "*ມີຄຳຂຽນໄວ້ໃນພະຄຳພີວ່າ*"
ພະອົງເວົ້າເຖິງອັນໃດ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ຄຳຂຽນໃນປະເທດເອຢິບ

ຂ. ພະທຳຄຳພີເດີມ

ຄ. ທຳນຽມຂອງພວກຟາລິຊາຍ

**3** ໃນ II ຕີໂມທຽວ 3:16 ມີຄຳສອນວ່າ ພະຄຳພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກໃຜ? (ເລືອກ)

______ ທູດສະຫວັນ ______ ພະເຈົ້າ ______ ມະນຸດ

**4** ພະວິນຍານບໍລິສຸດຂອງພະເຈົ້າຊົງແນະນຳຜູ້ທີ່ຂຽນບັນທຶກໄວ້ໃນພະຄຳພີ ດັ່ງນັ້ນເຮົາຈະວ່າຢ່າງໃດ? (ຈົ່ງເລືອກ)

ກ._____ ພະວິນຍານຊົງບັນດົນໃຈຜູ້ຂຽນ

ຂ._____ ພະວິຫານຊົງບັນດົນໃຈຜູ້ຂຽນ

ຄ._____ ພະວິນຍານຊົງທ່ອງຂຶ້ນໃຈພະທຳ

**5** ໃນ 4 ຂໍ້ພະຄຳພີຕໍ່ໄປນີ້ ແມ່ນ 2 ຂໍ້ໃດທີ່ອ້າງເຖິງພະວິນຍານຂອງພະເຈົ້າບັນດົນໃຈຜູ້ຂຽນພະຄຳພີ? (ເລືອກ 2 ຂໍ້)

______ I ທຊນ 2:13 ______ II ເປໂຕ 1:20-21

______ ໂຢຮັນ 6:66 ______ ປຖກ 1:26

| | |
|---|---|
| ຝຶກ: | ໃຫ້ທ່ານເອົາສໍສີຂຽວຂີດກ້ອງ I ທຊນ 2:13 ແລະ II ເປໂຕ 1:20-21 |

ຕອບ:

**1** *ພະທຳຂອງພະເຈາ ແລະພະວິນຍານບໍລິສຸດ*

**2** *ຂ.ຖືກ*

**3** *ພະເຈາ*

**4** *ກ.ຖືກ*

**5** *I ທຊນ 2:13 II ເປໂຕ 1:20-21*

**6** ປື້ມທໍາມະດາມີແຕ່ຄວາມເວົ້າຂອງມະນຸດເທົ່ານັ້ນ ແຕ່ພະຄໍາພີປະກອບດ້ວຍ ພະ ________ ຂອງ ພະ ________ ທີ່ພະວິນຍານ ບໍລິສຸດບັນ ________ ໃຫ້ຜູ້ເຫັນເຫດການຂຽນ ______ ໄວ້ ເຮົາຈຶ່ງເອີ້ນວ່າເປັນພະທໍາຂອງ _________ (ຕື່ມຄວາມທີ່ຂາດ)

**7** ຜູ້ທີ່ຂຽນບັນທຶກພະຄໍາພີກໍເປັນມະນຸດທໍາມະດາເຊັ່ນດຽວກັນ ແຕ່ເຂົາໄດ້ຮັບການບັນດົນໃຈໃຫ້ຂຽນຈາກ ພະ ___________________________ .(ຈົ່ງຕື່ມຄວາມທີ່ຂາດ)

**8** ພະຄໍາພີເປັນພະທໍາຂອງພະເຈົ້າ ເພາະເຫດໃດ? (ໃຫ້ເລືອກເອົາຂໍ້ທີ່ຖືກ)
ກ. ເວົ້າເລື່ອງຂອງພະເຈົ້າແດ່
ຂ. ໃນບາງຂໍ້ສັງເກດພະສຸລະສຽງຂອງພະຈົ້າໄດ້
ຄ. ພະເຈົ້າບັນດົນໃຈໃຫ້ຂຽນບັນທຶກເຫດການທີ່ພະອົງສະແດງແລະກ່າວໄວ້

**9** ໃຫ້ທ່ານສະເຫນີຊື່ພະຄໍາພີພ້ອມບົດແລະຂໍ້ຢ່າງຫນ້ອຍ 2 ຂໍ້ ທີ່ບອກວ່າພະເຈົ້າບັນດົນໃຈຂອງຜູ້ທີ່ຂຽນບັນທຶກໄວ້?

_________________________________ ແລະ ______________________________

**10** ຄໍາວ່າ "ພະທໍາຄໍາພີ" ແລະ "ພະຄໍາພີ" ມີຄວາມຫມາຍອັນດຽວຊຶ່ງຫມາຍເຖິງພະຄໍາຂອງ ________________________ (ຈົ່ງຕື່ມຄວາມທີ່ຂາດ)

**11** ຈົ່ງອ່ານ ເຮັບເລີ 1:1 ເປັນການຫນ້າອັດສະຈັນໃຈທີ່ຜູ້ແຕ່ງຈັກກະວານຍັງມີຄໍາຈະກ່າວຕໍ່ມະນຸດ ໃນສະໄຫມກ່ອນນັ້ນ ພະເຈົ້າໄດ້ກ່າວແກ່ພວກບັນພະບຸລຸດດ້ວຍໃຜ? __________

**12** ພວກບັນພະບຸລຸດໃນ ເຮັບເລີ 1:1 ນັ້ນຫມາຍເຖິງພວກຊາດຢິວແຕ່ສະໄຫມ ກ່ອນ ຄ.ສ ຜູ້ປະກາດພະທໍາບາງຄົນມີ ລາຍຊື່ຕໍ່ໄປນີ້: ໂຮເຊອາ, ໂຢເອນ, ມີກາ, ແລະ ມາລາກີ ຜູ້ປະກາດພະທໍາເຫຼົ່ານັ້ນຂຽນບັນທຶກໄວ້ກາຍເປັນພະຄໍາພີເດີມ ໃນພະທໍາເຫຼົ່ານັ້ນທີ່ພວກເຂົາຂຽນ ບົດທໍາອິດ ຂໍ້ທໍາອິດ ເຂົາທຸກຄົນສະເຫນີຄໍາຂຽນຂອງເຂົາວ່າເປັນພະທໍາຈາກໃຜ? ___

ຕອບ:

**6** *ພະຄໍາ...ພະເຈາ...ບັນດົນ...ບັນທຶກ...ທໍາຂອງພະເຈາ*

**7** *ພະວິນຍານບໍລິສຸດ*

**8** *ຄ.ຖືກ*

**9** *II ຕມທ 3:16, I ທຊບ 2:13, IIເປໂຕ 1:20-21 (2 ຂໍ້ໃດກໍໄດ້)*

**10** *ພະເຈາ*

**11** *ດ້ວຍຜູ້ປະກາດພະທໍາ*

**12** *ຈາກ ພະເຈາ*

**13** ສ່ວນຜູ້ປະກາດພະທຳຂອງພະເຈົ້າເຫຼົ່ານັ້ນ ເຂົາເປັນຄົນທີ່ພະເຈົ້າຊົງເລືອກໄວ້ແລ້ວຈັດຕຽມໄວ້ກ່ອນ. ໃຫ້ທ່ານອ່ານ ຈາກ ເຢເລມີຢາ 1:5 ແລະ ຄາລາເຕຍ 1:15.
ພະເຈົ້າຊົງເລືອກ ເຢເລມີຢາ ແລະໂປໂລ ຈາກຍຸກໃດ? (ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. ກ່ອນທີ່ເຂົາຮັບຮູ້ພະອົງ

ຂ. ກ່ອນທີ່ເຂົາຈະອ່ານໄດ້ຂຽນເປັນ

ຄ. ກ່ອນເຂົາເກີດ

ງ. ກ່ອນເຂົາຈະຮັບການນິມິດຈາກພະເຈົ້າ

**14** ເຢເລມີຢາ ແລະໂປໂລ ມີແຕ່ 2 ຄົນໃນຈຳນວນ 40 ຄົນ ທີ່ພະເຈົ້າເລືອກໄວ້ເປັນຜູ້ຂຽນບັນທຶກພະຄຳພີ ແຕ່ວ່າ ຕະຫຼອດ 40 ຄົນເຫຼົ່ານັ້ນໄດ້ຮັບການບັນດົນໃຈຈາກພະ ______________ ເພື່ອໃຫ້ເຂົາຂຽນຕາມຄຳສັ່ງຂອງພະຜູ້ _______________ (ຕື່ມຄວາມທີ່ຂາດ)

**15** ມີຈັກຄົນຂຽນພະຄຳພີ? ________________________________________________

**16** ພະວິນຍານຂອງພະເຈົ້າຊົງບັນດົນໃຈຂອງຜູ້ເຫັນເຫດການຂຽນຄວາມໃນພະຄຳພີກໍແມ່ນຢູ່, ແຕ່ຈະແມ່ນວ່າພະເຈົ້າບັງ ຄັບມືຂອງເຂົາໃຫ້ເຂົາຂຽນດ້ວຍບໍ່ຄິດບໍ! ຖ້າເປັນຢ່າງນັ້ນ ເຂົາຈະກາຍເປັນເຄື່ອງຈັກທີ່ບໍ່ມີຊີວິດຊຶ່ງເຮັດຕາມການ ບັງຄັບບັນຊາເທົ່ານັ້ນ. ການບັນດົນໃຈຂອງຜູ້ຂຽນບັນທຶກເປັນຢ່າງໃດ? (ໃຫ້ຂີດຂ້າຂໍ້ທີ່ບໍ່ຖືກອອກ)

ກ. ພະເຈົ້າບັງຄັບມືໃຫ້ເຂົາຂຽນດ້ວຍບໍ່ຕັ້ງສະຕິ

ຂ. ພະເຈົ້າບັນດົນໃຈໃຫ້ເຂົານຶກເຫັນເຫດການຜ່ານມາແລ້ວຂຽນບັນທຶກເລື່ອງຕ່າງໆ ໄວ້

**17** ຜູ້ທີ່ຂຽນບັນທຶກທັງຫຼາຍເຫຼົ່ານັ້ນໄດ້ຮັບຮູ້ເລື່ອງຈາກພະເຈົ້າ ແຕ່ວ່າເຂົາຕ້ອງປະກອບເລື່ອງໃນຄຳເວົ້າແລະໃນພາສາ ທີ່ປະຊາຊົນໃນທ້ອງຖິ່ນຈະເຂົ້າໃຈໄດ້ ຄືເຂົາຂຽນໃນພາສາໃດ? (ໃຫ້ເລືອກໝາຍເອົາຂໍ້ທີ່ຖືກ)

ກ. ພາສາແບບສະຫວັນ

ຂ. ພາສາຕ່າງປະເທດ

ຄ. ພາສາແບບສາມັນຊົນທຳມະດາ

ຕອບ:

**13** *ຄ. ຖືກ*

**14** *ພະວິນຍານ ຜູ້ເປັນເຈົ້າ*

**15** *40 ຄົນ*

**16** *ຂີດຂ້າຂໍ້ ກ.ອອກ*

**17** *ຄ. ຖືກ*

**18** ທີ່ວ່າພະຄຳພີໄດ້ຖືກບັນດົນໃຈຈາກພະວິນຍານບໍລິສຸດຫມາຍຄວາມຢ່າງໃດ? (ຈົ່ງຂີດຂ້າຂໍ້ໃດທີ່ບໍ່ຖືກ)

ກ. ພະເຈົ້າແນະນຳເລື່ອງໂດຍພະວິນຍານບໍລິສຸດໃຫ້ຜູ້ຂຽນບັນທຶກນັ້ນຮູ້

ຂ. ຜູ້ຂຽນເລີຍບັນທຶກເລື່ອງຈາກພະເຈົ້າລົງເປັນພາສາຄົນທຳມະດາ

ຄ. ພະວິນຍານບັງຄັບມືຂອງຜູ້ຂຽນໃຫ້ເປັນພາສາແປກ ໆ

**19** ພະເຈົ້າໃຊ້ຈັກຄົນເປັນຜູ້ຂຽນບັນທຶກເລື່ອງໃນພະຄຳພີ? (ໃຫ້ຫມາຍ ໃສ່ຂໍ້ທີ່ເຫັນວ່າຖືກ)

______ 40 ຄົນ ______ 66 ຄົນ ______ 400 ຄົນ

**20** ຄັນເຮົາເວົ້າເຖິງຫຼັກຄວາມເຊື່ອວ່າ “ພະເຈົ້າບັນດົນພະຄຳພີ” ແປວ່າ: (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ພະເຈົ້າບັງຄັບຜູ້ຂຽນແບບເຄື່ອງຈັກ

ຂ. ພະວິນຍານຂອງພະເຈົ້າຊົງບັນດົນໃຈຂອງຜູ້ເຫັນເຫດການຂຽນເລື່ອງໄວ້ໃນພະຄຳພີ

ຄ. ຜູ້ຂຽນເລີຍບັນທຶກໄວ້ເປັນພາສາແບບສາມັນຊົນທຳມະດາ

ງ. ພະວິນຍານໃຊ້ຜູ້ຂຽນເຫມືອນເຂົາເປັນຈັກພິມດີດ

**21** ມະນຸດຜູ້ເປັນຜູ້ຂຽນບັນທຶກໄວ້ເປັນພະຄຳພີເຫຼົ່ານັ້ນມີຫຼາຍອາຊີບເຫມືອນກັນເຊັ່ນ: ເປໂຕ ແລະ ໂຢຮັນ ເປັນຄົນຫາ ປາ, ດານີເອນເປັນຜູ້ປົກຄອງແຂວງ, ອາຈານ ໂປໂລ ມີອາຊີບຫຍິບຜ້າເຕັ້ນ.

ກ. ມັນທາຍ ມີອາຊີບຫຍັງ? ____________________________________________

ຂ. ດາວິດ ມີອາຊີບຫຍັງ? ______________________________________________

**22** ພະເຈົ້າຈັດແຈງຄົນຫຼາຍຢ່າງມາເປັນຜູ້ຂຽນບັນທຶກເລື່ອງໄວ້ໃນພະຄຳພີ ເຂົາມາຈາກຫຼາຍບ່ອນຫຼາຍທີ່ ເຂົາມີຫຼາຍອາ ຊີບ ແລະ ຢູ່ໃນຫຼາຍຍຸກຫຼາຍສະໄຫມ. ຜູ້ຂຽນບັນທຶກທັງຫມົດມີຈັກຄົນ? ____________________________________________________________

**23** ທ່ານຈື່ກະສັດດາວິດ ບໍ່? ເພິ່ນເປັນຜູ້ຫນຶ່ງທີ່ຂຽນບັນທຶກເຫດການທີ່ພະເຈົ້າສຳແດງໄວ້ເປັນພະຄຳພີ. ດາວິດຢູ່ກ່ອນ ພະກຳເນີດຂອງພະເຢຊູ ຈັກປີ? ___________________________

ຕອບ:

**18** *ຂ້າອອກແຕ່ຂໍ້ ຄ.*

**19** *40 ຄົນ*

**20** *ຂ. ແລະ ຄ.ຖືກ*

**21** *ກ. ເກັບພາສີ ຂ. ຜູ້ລ້ຽງແກະ ແລະ ກະສັດ*

**22** *40 ຄົນ*

**23** *1000 ປີ*

**24** ພະທຳເຫຼັ້ມທຳອິດໃນພະຄຳພີຖືກຂຽນໄວ້ກ່ອນພະກຳເນີດຈັກປີ? (ໃຫ້ໝາຍ ເອົາຂໍ້ທີ່ຖືກ)

______ 500 ປີ ______ 66 ປີ ______ 50 ປີ ______ 1500 ປີ

**25** ແມ່ນດ້ວຍເຫດໃດທີ່ຜູ້ຂຽນບັນທຶກເຫຼົ່ານັ້ນສ່ວນຫຼາຍບໍ່ຮູ້ຈັກກັນແລະກັນ?
(ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ເຂົາບໍ່ໄດ້ຢູ່ໃນຍຸກດຽວ

ຂ. ເຂົາເປັນສັດຕູກັນ

ຄ. ເຂົາບໍ່ມັກພົວພັນກັນ

**26** ກ. ແມ່ນຜູ້ປະກາດພະທຳຄົນໃດໃນພະຄຳພີເດີມທີ່ທຳນວາຍກ່ຽວພະກຳເນີດຂອງພະເຢຊູ?

______________________________________________________________

ຂ. ຕອນນັ້ນເພິ່ນຢູ່ປະຈຳໃນເມືອງໃດ? ______________________________

(ຖ້າບໍ່ຈື່ ກັບໄປເບິ່ງ ບົດທີ 17 ໃນ ມັດທາຍ ເຫຼັ້ມ I ກໍໄດ້)

**27** ມັດທາຍ ໂຢຮັນ ແລະ ເປໂຕ ກໍເປັນຜູ້ຂຽນບັນທຶກເລື່ອງໄວ້ໃນພະຄຳພີ ເຂົາທັງ 3 ຢູ່ປະເທດໃດ? ______________________________________________________

**28** ໃຫ້ທ່ານກັບໄປເບິ່ງໜ້າປົກບົດນີ້ ໃນຮູບນັ້ນມີ 5 ທະວີບ, ທະວີບໃດແດ່? __________

______________________________________________________________

**29** ໃນຮູບນີ້ມີ 3 ທະວີບ, ທະວີບໃດແດ່? ______________________________




ຕອບ:

**24** *1500 ປີ*

**25** *ກ.ຖືກ*

**26** *ກ. ດານີເອນ ຂ. ບາບີໂລນ*

**27** *ປາແລັດສະຕິນ*

**28** *ອາຊີ ຢູໂຣບ ອາຟລິກາ ອາເມລິກາເໜືອ ອາເມລິກາໃຕ້*

**29** *ຢູໂຣບ ອາຊີ ອາຟລິກາ*

**30** ທັງດານີເອນ ມັດທາຍ ແລະ ໂຢຮັນ ຢູ່ທະວີບໃດ? ____________________________

**31** ໃນເມື່ອເວລາອາຈານໂປໂລແກ່ແລ້ວ ລາວເດີນທາງໄປນະຄອນຫຼວງຂອງຈັກກະພັດໂລມ, ອາຈານໂປໂລຂຽນຈົດ ຫມາຍຫຼາຍສະບັບທີ່ເປັນສ່ວນໃນພະຄຳພີໃຫມ່ຈາກກຸງໂລມ.

ກ. ສະໄຫມສຸດທ້າຍໃນຊີວິດຂອງ ອາຈານໂປໂລເພິ່ນຂຽນພະທຳໃນກຸງໃດ? __________

ຂ. ກຸງນັ້ນຢູ່ໃນທະວີບໃດ? ____________________________________________

**32** ເຢເລມີຢາ ຢູ່ກ່ອນອາຈານໂປໂລຫຼາຍສັດຕະວັດ ເພິ່ນກໍເປັນຜູ້ປະກາດພະທຳຄົນຫນຶ່ງທີ່ຫຍຸ້ງຍາກແລະທຸກໃຈຫຼາຍ ຈາກອ້າຍນ້ອງຊາດຢິວ ຜົນສຸດທ້າຍເພິ່ນຈຶ່ງຖືກຈັບໄປຕ່າງປະເທດ. ພະທຳ ເຢເລມີຢາ 43:7-8 ເວົ້າດັ່ງນີ້:

*"ແລະໄດ້ເຂົ້າໄປໃນປະເທດເອຢິບ ດ້ວຍເຫດວ່າເຂົາບໍ່ໄດ້ຟັງຄວາມຂອງພະຜູ້ເປັນເຈົ້າ ແລະເຂົາໄດ້ໄປເຖິງ ເມືອງຕາປາເນ ແລະພະຄຳຂອງພະຜູ້ເປັນເຈົ້າໄດ້ມາແກ່ທ່ານເຢເລມີຢາ ທີ່ເມືອງຕາປາເນ"*

ກ. ພະທຳຂອງພະເຈົ້າມາເຖິງຜູ້ປະກາດເຢເລມີຢາ ໃນເມືອງຕາປາເນ ປະເທດໃດ? _____

ຂ. ເວລານັ້ນເພິ່ນຂຽນພະທຳຂອງພະເຈົ້າໃນປະເທດເອຢິບ ທະວີບໃດ? ____________

**33** ພະຄຳພີຖືກແຕ່ງໄວ້ໃນ 3 ທະວີບໃດ? ____________________________________

**34** ກ. ພະຄຳພີປະກອບດ້ວຍຈັກເຫຼັ້ມທັງຫມົດ? ________________________________

ຂ. ໃຊ້ເວລາຂຽນຈັກປີ? ______________________________________________

ຄ. ໃນຈັກທະວີບ? _________________________________________________

**35** ຜູ້ຂຽນພະຄຳພີບໍ່ໄດ້ປາກແຕ່ພາສາດຽວ ຍົກຕົວຢ່າງຄຳວ່າ "ລັບບີ" ແລະ "ເມຊີອາ" ມາຈາກພາສາຂອງຊາດຢິວ, ຊາດຢິວປາກພາສາໃດ? (ໃຫ້ຫມາຍ √ )

_____ ພາສາອາລັບ _____ ພາສາລາຕິນ _____ ພາສາເຮັບເລີ

**36** ພະຄຳພີເດີມເປັນທີ່ຂຽນໄວ້ສະເພາະເພື່ອຊາດຢິວເປັນຕົ້ນ ພະວິນຍານຂອງພະເຈົ້າເປັນຜູ້ບັນດົນໃຈໃຫ້ຜູ້ທີ່ ເຫັນເຫດການຕ່າງໆ ຂຽນບັນທຶກໄວ້. ຜູ້ຂຽນບັນທຶກເຫຼົ່ານັ້ນຂຽນໄວ້ໃນພະທຳຄຳພີເດີມເປັນພາສາໃດ? ____________________________________________

ຕອບ:

**30** *ອາຊີ*

**31** *ກ. ກຸງໂລມ ຂ. ທະວີບຢູໂຣບ*

**32** *ກ. ເອຢິບ ຂ. ອາຟລິກາ*

**33** *ອາຊີ ຢູໂຣບ ອາຟລິກາ*

**34** *ກ. 66 ເຫຼັ້ມ ຂ. 1600 ປີ ຄ. 3 ທະວີບ*

**35** *ພາສາເຮັບເລີ*

**36** *ພາສາເຮັບເລີ*

**37** ຄຳວ່າ "ພະເມຊີອາ" ໃນພາສາກະລີກ ແປວ່າ ພະຄຣິດ, "ພະເມຊີອາ" ເປັນພາສາໃດ? ___

**38** ແຕ່ພະຄຳພີໃຫມ່ໄດ້ຖືກຂຽນໄວ້ເພື່ອຄົນຕ່າງປະເທດທີ່ບໍ່ແມ່ນຊາດຢິວສ່ວນຫຼາຍ, ພາສາທີ່ຄົນຮູ້ທົ່ວໄປໃນຈັກກະພັດ ໂລມສະໄຫມນັ້ນຄືພາສາກະລີກ. ແມ່ນພະວິນຍານຂອງພະເຈົ້າທີ່ບັນດົນໃຈຂອງອາຈານໂປໂລ ໃນເວລາເພິ່ນຂຽນຈົດຫມາຍໄປເຖິງຄຣິສຕະຈັກຕ່າງໆ ອາຈານໂປໂລຂຽນໃນພາສາໃດ? ____________________________________________

**39** ກ. ດັ່ງນັ້ນ 39 ເຫຼັ້ມໃນພະຄຳພີເດີມຖືກຂຽນໃນພາສາໃດ? ______________________

ຂ. 27 ເຫຼັ້ມໃນພະຄຳພີໃຫມ່ຖືກຂຽນໃນພາສາໃດ? __________________________

**40** ທັງຫມົດໃນພະຄຳພີມີຈັກເຫຼັ້ມ? ________________________________________

**41** ກ. ມີຈັກຄົນທີ່ຂຽນບັນທຶກໄວ້ໃນພະຄຳພີ? ________________________________

ຂ. ໃຊ້ເວລາຂຽນຈັກປີ? _____________________________________________

ຄ. ຈາກຈັກທະວີບ? _______________________________________________

ງ. ທັງຫມົດມີຈັກເຫຼັ້ມ? ____________________________________________

**42** ເຖິງວ່າມີນັກປະພັນຫຼາຍຄົນທີ່ມີອາຊີບຫຼາຍຢ່າງ ພວກເຂົາຢູ່ໃນຫຼາຍສັດຕະວັດ, ປາກພາສາຕ່າງກັນ, ແລະຢູ່ໃນສາມ ທະວີບກໍຕາມ ແຕ່ທັງ 66 ເຫຼັ້ມໃນພະຄຳພີເວົ້າແຕ່ເລື່ອງດຽວ ນັ້ນແຫຼະເປັນຫຼັກຖານວ່າ: (ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ຜູ້ຂຽນເປັນຄົນສະຫຼາດຫຼາຍ

ຂ. ພະວິນຍານຂອງພະເຈົ້າ ບັນດົນໃຈຜູ້ທີ່ເຫັນຂຽນບັນທຶກໄວ້

ຄ. ເຂົາສ້ອມແຊມໃຫມ່ຫຼາຍເທື່ອ

**43** ພະຄຳພີເປັນອັນຫນຶ່ງອັນດຽວກັນຕະຫຼອດຈາກກົກໄປເຖິງປາຍຄື: ພະຄຳພີສັນຍາຢູ່ສະເຫມີວ່າ ຈະມີພະຜູ້ຊ່ວຍຈະມາ ຊຶ່ງໃນພາສາເຮັບເລີ ເອີ້ນຊື່ວ່າ ພະເມ __________ ຄຳສັນຍາປາກົດມາເທື່ອທຳອິດໃນ ປຖກ ບົດ _____ ຂໍ້ ______ ພະຄຳພີເດີມຖືກຂຽນໄວ້ໃນພາສາ ________________ ໃນພະຄຳພີໃຫມ່ຊຶ່ງຖືກຂຽນໄວ້ໃນພາສາ ____________ ເວົ້າເຖິງຄວາມສຳເລັດຂອງຄຳສັນຍານັ້ນໃນພະເຢຊູຄຣິດ. (ຈົ່ງຕື່ມຄວາມທີ່ຂາດ)

ຕອບ:

***37*** *ພາສາເຮັບເລີ*

***38*** *ພາສາກະລີກ*

***39*** *ກ. ພາສາເຮັບເລີ ຂ. ພາສາກະລີກ*

***40*** *66 ເຫຼັ້ມ*

***41*** *ກ. 40 ຄົນ ຂ. 1600 ປີ ຄ. 3 ທະວີບ ພາສາເຮັບເລີ...ພາສາກະລີກ ງ. 66 ເຫຼັ້ມ*

***42*** *ຂ.ຖືກ*

***43*** *ພະເມຊີອາ...ປຖກ 3:15*

**44** ໃນໂລກນີ້ບໍ່ເຄີຍມີປຶ້ມໃດ ນອກຈາກພະທຳຂອງ ______________________________

ທີ່ ປະກອບ ດ້ວຍ 66 ເຫຼັ້ມ
ໃນ 2 ພາສາ
ຢູ່ 3 ທະວີບ
ໂດຍ 40 ຄົນເປັນຜູ້ຂຽນ
ໃຊ້ເວລາຂຽນ 1600 ປີ, ແຕ່ຍັງເວົ້າເລື່ອງດຽວກັນທັງຫມົດ.

**45** ກ. ຜູ້ທີ່ຂຽນບັນທຶກໃນພະຄຳພີມີຈັກຄົນ? ______________________________
ຂ. ຖືກຂຽນໃນຈັກພາສາ? ______________________________
ຄ. ໃນຈັກທະວີບ? ______________________________
ງ. ໃຊ້ເວລາຂຽນທັງຫມົດຈັກປີ? ______________________________
ຈ. ປະກອບດ້ວຍຈັກເຫຼັ້ມ? ______________________________

**46** ໃນບົດຮຽນຕໍ່ໄປອີກສອງບົດ ເຮົາຈະຮຽນເລື່ອງຫຼັກຖານຫຼາຍປະການວ່າ ພະຄຳພີສອດຄ່ອງກັນຕະຫຼອດຈາກປະຖົມ ມະການໄປເຖິງພະນິມິດ ແລ້ວຈະຮຽນອີກເລື່ອງການບັນດົນໃຈຂອງຜູ້ຂຽນພະຄຳພີ ຈຶ່ງວ່າພະຄຳພີເປັນພະ __________ ຂອງ ພະ ______________ (ຈົ່ງຕື່ມຄວາມທີ່ຂາດ)

**47** ໃນຂ່າວປະເສີດໂຢຮັນ 1:1 ທີ່ເວົ້າເຖິງພະເຢຊູ ເປັນພະ ________ ຕັ້ງແຕ່ເມື່ອຕົ້ນເດີມ. (ຈົ່ງຕື່ມຄວາມທີ່ຂາດ)

**48** ກ. ພະເຢຊູຖືກປະຕິສົນທິຢ່າງໃດ? ໃນເມື່ອພະ __________ ມາເຖິງນາງ __________
ຂ. ພະທຳຄຳພີຖືກບັນດົນໃຈຢ່າງໃດ? ໃນເມື່ອພະ ________ ມາເຖິງ ____________

ຕອບ:

**44** *ພະເຈົ້າ*

**45** *ກ. 40 ຄົນ ຂ. 2 ພາສາ ຄ. 3 ທະວີບ ງ. 1600 ປີຂ. ພະວິນຍານ...ຜູ້ຂຽນບັນທຶກເຫດການ ຈ. 66 ເຫຼັ້ມ*

**46** *ຄຳ...ເຈົ້າ*

**47** *ພະທຳ*

**48** *ກ. ພະວິນຍານ...ນາງມາລີອາ*

**49** ພະເຈົ້າໄດ້ຕິດຕໍ່ກັບມະນຸດມາໂດຍທາງພະເຢຊູມາຮັບສະພາບເປັນມະນຸດ ຈຶ່ງເອີ້ນວ່າພະອົງເປັນພະທຳຂອງພະເຈົ້າ ແລະພະເຈົ້າ ໄດ້ຕິດຕໍ່ກັບມະນຸດໃນການບັນດົນໃຈຜູ້ທີ່ຂຽນຄຳເວົ້ານັ້ນ ມາຈາກພະວິນຍານບໍລິສຸດຈຶ່ງເອີ້ນພະຄຳພີວ່າ ເປັນພະທຳຂອງພະເຈົ້າ.







ໃນວົງມົນເຫຼົ່ານັ້ນຮູບໃດຫມາຍເຖິງພະຄຳພີ? ______________________________

ຮູບໃດຫມາຍເຖິງພະເຢຊູ? ____________________________________________

**50** ໃຫ້ທ່ານອ່ານ ເຮັບເລີ 1:1-2

ກ. ຂໍ້ທີ 1 ນັ້ນອ້າງເຖິງພະເຢຊູ ຫຼືພະຄຳພີ ທີ່ຂຽນໄວ້? ________________________

ຂ. ຂໍ້ທີສອງອ້າງເຖິງໃຜ? ____________________________________________

*ຢ່າລືມຕອບບົດເສັງທີ 13*

ຕອບ:

***49*** *ຮູບ ກ. ຄືພະເຢຊູ ຮູບ ຂ. ຄືພະຄຳພີທີ່ຂຽນໄວ້*

***50*** *ກ. ພະຄຳພີທີ່ຂຽນໄວ້ ຂ. ພະເຢຊູ*